**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ
ສໍານັກງານປົກປ້ອງເງິນຝາກ ເລກທີ 25/ສປງ

ນະຄອນຫຼວງວຽງຈັນ, ວັນທີ 25 ມີນາ 2022

# ແຈ້ງການ

**ເຖິງ:** ບັນດາສະມາຊິກຂອງ ສໍານັກງານປົກປ້ອງເງິນຝາກ.

**ເລື່ອງ:** ການແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານປົກປ້ອງເງິນຝາກ.

- ອີງຕາມ ດໍາລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສໍານັກງານປົກປ້ອງເງິນຝາກ ສະບັບເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍວົງເງິນປົກປ້ອງ ສະບັບເລກທີ 1197/ທຫລ, ລົງວັນທີ 31 ທັນວາ 2019.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນ ຂໍ້ທີ 4 ມາດຕາ 34 (ສິດ ແລະ ພັນທະຂອງສະມາຊິກ) ຂອງດໍາລັດວ່າດ້ວຍການປົກປ້ອງເງິນຝາກ, ສະມາຊິກຂອງສໍານັກງານປົກປ້ອງເງິນຝາກ ມີພັນທະໃນການປະກາດໃຫ້ສັງຄົມຮັບຊາບ ກ່ຽວກັບການເປັນສະມາຊິກຂອງສໍານັກງານປົກປ້ອງເງິນຝາກ ໂດຍຕິດປະກາດການເຂົ້າເປັນສະມາຊິກ ແລະ ຂໍ້ມູນກ່ຽວກັບການປົກປ້ອງເງິນຝາກ ຢູ່ສະຖານທີ່ໃຫ້ບໍລິການດ້ານເງິນຝາກຂອງສໍານັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການ.

ວຽກງານປົກປ້ອງເງິນຝາກ ມີຄວາມຈໍາເປັນຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ມີຄວາມສອດຄ່ອງ ໂດຍສະເພາະ ການສ້າງຄວາມຮັບຮູ້ໃຫ້ຜູ້ຝາກເງິນໄດ້ຮັບຊາບຢ່າງທົ່ວເຖິງ ຕໍ່ກັບສິດ ແລະ ຜົນປະໂຫຍດທີ່ຜູ້ຝາກເງິນຈະໄດ້ຮັບໃນເວລາທີ່ຝາກເງິນ ແລະ ໃນເວລາທີ່ສະມາຊິກໃດໜຶ່ງ ຢູ່ໃນສະພາວະລົ້ມລະລາຍ.

ສະນັ້ນ, ສໍານັກງານປົກປ້ອງເງິນຝາກ ຈຶ່ງອອກແຈ້ງການແນະນໍາເຖິງ ບັນດາສະມາຊິກຂອງສໍານັກງານປົກປ້ອງເງິນຝາກ ເພື່ອປະຕິບັດດັ່ງນີ້:

1. ຕິດປະກາດໃບຢັ້ງຢືນການເປັນສະມາຊິກ ແລະ ແຜ່ນໂຄສະນາ (Poster) ຢູ່ສະຖານທີ່ໃຫ້ບໍລິການດ້ານເງິນຝາກຂອງສໍານັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການ. ການຕິດປະກາດໃບຢັ້ງຢືນດັ່ງກ່າວ ຕ້ອງຮັບປະກັນໃຫ້ຜູ້ຝາກເງິນ ສາມາດເບິ່ງເຫັນໄດ້ຢ່າງຊັດເຈນຕະຫຼອດເວລາ;

2. ພິມເນື້ອໃນຕໍ່ໄປນີ້ "**ເງິນຝາກຂອງທ່ານໄດ້ຮັບການປົກປ້ອງ ຈາກສໍານັກງານປົກປ້ອງເງິນຝາກ ຕາມລະບຽບການ**" ລົງໃນປຶ້ມບັນຊີເງິນຝາກ, ເອກະສານຢັ້ງຢືນເງິນຝາກ, ແຜ່ນພັບ, ໃບປິວທີ່ສະມາຊິກນໍາໃຊ້ເພື່ອລະດົມເງິນຝາກ, ສະແດງເນື້ອໃນດັ່ງກ່າວຢູ່ໃນໜ້າຈໍຕູ້ ATM, ໜ້າຈໍ TV ຫຼື ໜ້າຈໍ LED ແລະ ຮູບການອື່ນ ທີ່ບໍ່

ຂັດກັບກົດໝາຍ ແລະ ລະບຽບການ. ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ຕ້ອງເປັນເຈົ້າການໃນການກຳນົດຮູບແບບ ແລະ ຂະໜາດຂອງ ຕົວໜັງສືຕາມຄວາມເໝາະສົມ ພ້ອມທັງຮັບປະກັນໃຫ້ຜູ້ຝາກເງິນ ສາມາດອ່ານໄດ້ຢ່າງຊັດເຈນ. ສຳລັບສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ທີ່ໄດ້ຈັດພິມປຶ້ມບັນຊີເງິນຝາກ, ເອກະສານຢັ້ງຢືນເງິນຝາກ, ແຜ່ນພັບ ແລະ ໃບປິວທີ່ສະມາຊິກນຳໃຊ້ເພື່ອລະດົມເງິນຝາກ ໄວ້ກ່ອນແຈ້ງການສະບັບນີ້ມີຜົນສັກສິດ, ສະມາຊິກຕ້ອງພິມເນື້ອໃນ ໃສ່ເອກະສານ ແລະ ຮູບແບບ ດັ່ງຕໍ່ໄປນີ້:

ກ. ພິມສະຕິກເກີ້ຕົວໜັງສືຕິດໃສ່ຈຸດທີ່ເໝາະສົມ;

ຂ. ຮູບແບບກາຈ້ຳ;

ຄ. ພິມເນື້ອໃນໃສ່ເອກະສານແຕ່ລະສະບັບເພີ່ມເຕີມ;

ງ. ວິທີການອື່ນທີ່ເໝາະສົມ;

3. ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ຕ້ອງມອບໝາຍໃຫ້ພະນັກງານທີ່ເຮັດໜ້າທີ່ບໍລິການລູກຄ້າ (Teller) ຊ່ວຍແນະນຳຂໍ້ມູນພື້ນຖານ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານປົກປ້ອງເງິນຝາກ ໃຫ້ລູກຄ້າເງິນຝາກ ຢ່າງຖືກຕ້ອງ ແລະ ຊັດເຈນ ໂດຍສຳນັກງານປົກປ້ອງເງິນຝາກ ຈະເປັນຜູ້ສະໜອງຂໍ້ມູນທີ່ຈຳເປັນ ແລະ ຄຳແນະນຳໃຫ້ແກ່ສະມາຊິກ;

4. ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ຕ້ອງເຜີຍແຜ່ໂຄສະນາວຽກງານປົກປ້ອງເງິນຝາກ, ການເປັນສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ແລະ ການໂຄສະນາກ່ຽວກັບເງິນຝາກ ຜ່ານທາງເວັບໄຊທ໌, ວາລະສານ, ຫຼື ຮູບການຕ່າງໆ ຂອງສະມາຊິກ ເພື່ອໃຫ້ສັງຄົມຮັບຊາບ ແລະ ເພີ່ມຄວາມເຂົ້າໃຈກ່ຽວກັບຫຼັກການພື້ນຖານຂອງວຽກງານປົກປ້ອງເງິນຝາກ ຢູ່ ສປປ ລາວ;

5. ສຳນັກງານປົກປ້ອງເງິນຝາກ ເປັນຜູ້ຮັບຜິດຊອບ ຄ່າໃຊ້ຈ່າຍໃນການຈັດພິມໃບຢັ້ງຢືນການເປັນສະມາຊິກ ແລະ ແຜ່ນໂຄສະນາ (Poster) ເພື່ອແຈກຢາຍໃຫ້ສະມາຊິກ;

6. ສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ເປັນເຈົ້າການ ແລະ ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ທີ່ຕິດພັນກັບການພິມເນື້ອໃນ "**ເງິນຝາກຂອງທ່ານໄດ້ຮັບການປົກປ້ອງ ຈາກສຳນັກງານປົກປ້ອງເງິນຝາກ ຕາມລະບຽບການ**" ລົງໃນປຶ້ມບັນຊີເງິນຝາກ, ເອກະສານຢັ້ງຢືນເງິນຝາກ, ແຜ່ນພັບ, ໃບປິວທີ່ສະມາຊິກນຳໃຊ້ເພື່ອລະດົມເງິນຝາກ, ໜ້າຈໍຕູ້ ATM, ໜ້າຈໍ TV ຫຼື ໜ້າຈໍ LED ແລະ ຮູບການອື່ນ;

ສະມາຊິກຂອງ ສຳນັກງານປົກປ້ອງເງິນຝາກ ຕ້ອງດຳເນີນການປະຕິບັດວຽກງານດັ່ງກ່າວ ພາຍໃນ 90 ວັນ ນັບແຕ່ສຳນັກງານປົກປ້ອງເງິນຝາກ ໄດ້ອອກແຈ້ງການສະບັບນີ້. ກໍລະນີ ສະມາຊິກໃດໜຶ່ງຫາກບໍ່ປະຕິບັດຕາມແຈ້ງການແນະນຳສະບັບນີ້ ຈະຖືກປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

**ຫົວໜ້າສຳນັກງານປົກປ້ອງເງິນຝາກ**

ທະນາຄານແຫ່ງ ສປປ ລາວ
ສຳນັກງານປົກປ້ອງເງິນຝາກ

**ແສງດາວອີ ວົງຄຳຊາວ**

**DPO** Deposit Protection Office

# ສຳນັກງານປົກປ້ອງເງິນຝາກ

## ພວກເຮົາປົກປ້ອງ
## ເງິນຝາກຂອງທ່ານ

ວົງເງິນປົກປ້ອງສູງສຸດ
**50** ລ້ານກີບ

ຕໍ່ສະຖາບັນການເງິນ 1 ແຫ່ງ
**1** ແຫ່ງ

ຕໍ່ຜູ້ຝາກເງິນ 1 ລາຍ
**1** ລາຍ






: 021 330005
: www.dpo.gov.la
: info@dpo.gov.la

**ໝາຍເຫດ:** ວົງເງິນປົກປ້ອງ ແມ່ນອີງຕາມຂໍ້ຕົກລົງ ວ່າດ້ວຍວົງເງິນປົກປ້ອງ ເລກທີ 1197/ທຫລ, ລົງວັນທີ 31 ທັນວາ 2019